**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ແຂວງຊຽງຂວາງ

ພະແນກກະສິກຳ ແລະ ສິ່ງແວດລ້ອມ

ເລກທີ 2878 /ກສຂ

ຊຽງຂວາງ, ວັນທີ29.ກໍລະກົດ 2026

# ແຈ້ງການປະມູນ

**ເຖິງ: ບັນດາບໍລິສັດທີ່ປຶກສາ ບຸກຄົນ, ນິຕິບຸກຄົນ ທີ່ນັບຖື.**
**ເລື່ອງ: ການເຂົ້າຮ່ວມການປະມູນທີ່ປຶກສາຄຸມງານ ໂຄງການ ກໍ່ສ້າງ ຍົກລະດັບຊົນລະປະທານ ຈຳນວນ 3 ໂຄງການຢູ່ເມືອງຄຳ, ແຂວງຊຽງຂວາງ.**

- ອີງຕາມ ກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງ ດ້ວຍທຶນຂອງລັດ ສະບັບເລກທີ 30/ສພຊ, ລົງວັນທີ 02/11/2017;
- ອີງຕາມ ກົດໝາຍວ່າດ້ວຍການລົງທຶນຂອງລັດ ສະບັບປັບປຸງ ເລກທີ 72/ສພຊ, ລົງວັນທີ15 ທັນວາ 2015;
- ອີງຕາມ ກົດໝາຍວ່າດ້ວຍຊົນລະປະທານ ສະບັບເລກທີ 26/ສພຊ, ລົງວັນທີ 14 ທັນວາ 2012.

ພະແນກກະສິກຳ ແລະ ສິ່ງແວດລ້ອມ ຂໍຖືເປັນກຽດແຈ້ງມາຍັງບັນດາທ່ານ ຫົວໜ້າບໍລິສັດ, ບຸກຄົນ ແລະ ນິຕິບຸກຄົນ , ພາຍໃນ ແຂວງຊຽງຂວາງ ແລະ ຕ່າງແຂວງ ທີ່ມີໃບອະນຸຍາດດຳເນີນທຸລະກິດ ຖືກຕ້ອງຕາມກົດໝາຍ ຮັບຊາບຢ່າງທົ່ວເຖິງກັນວ່າ: ພະແນກກະສິກຳ ແລະ ສິ່ງແວດລ້ອມ ແຂວງຊຽງຂວາງ ຈະມີການປະມູນ ເພື່ອຄັດເລືອກເອົາບໍລິສັດທີ່ປຶກສາຄຸມງານກໍ່ສ້າງ ຈຳນວນ 3 ໂຄງການຄື:

1. ຄ່າໃຊ້ຈ່າຍວ່າຈ້າງທີ່ປຶກສາ ໂຄງການ ກໍ່ສ້າງ ຍົກລະດັບ ຊົນລະປະທານ ຝາຍໝໍ້ ນ້ຳມັດ, ບ້ານກ້ວຍ, ເມືອງຄຳ.
2. ຄ່າໃຊ້ຈ່າຍວ່າຈ້າງທີ່ປຶກສາ ໂຄງການກໍ່ສ້າງຊົນລະປະທານ ຄອງເໝືອງທົບ-ຖາງ, ບ້ານທົບ-ຖາງ, ເມືອງຄຳ.
3. ຄ່າໃຊ້ຈ່າຍວ່າຈ້າງທີ່ປຶກສາ ໂຄງການ ກໍ່ສ້າງຊົນລະປະທານ ຝາຍມຸ້ນ-ຝາຍຕາດ ນ້ຳມັດ, ບ້ານດົງຄຳ-ບ້ານຕາດ, ເມືອງຄຳ.

❖ **ເງື່ອນໄຂຕ່າງໆຂອງບໍລິສັດ:**

1. ເປັນບໍລິສັດຂອງຄົນລາວ 100% ແລະ ດຳເນີນທຸລະກິດທີ່ຖືກຕ້ອງຕາມກົດໝາຍ ຂອງ ສປປ ລາວ;
2. ສາມາດອອກແບບລະບົບຊົນລະປະທານໄດ້ ຕາມຄວາມຕ້ອງການ ແລະ ທັນກັບເວລາທີ່ກຳນົດໄວ້;
3. ສາມາດຮັບຮອງການຊຳລະດ້ວຍລະບົບເງິນໂອນ ຕາມງົບປະມານຂອງລັດແຕ່ລະປີ;
4. ເອກະສານທີ່ນຳມາສະແດງຕໍ່ຄະນະຮັບຜິດຊອບປະກອບມີ: 1) ປະຫວັດ ແລະ ປະສົບການ, 2) ໃບທະບຽນວິສາຫະກິດ, 3) ໃບອະນຸຍາດດຳເນີນທຸລະກິດ, 4) ໃບຢັ້ງຢືນອາກອນປີ2025, 5) ແຊັກວີຊາຄ້ຳປະກັນການປະມູນ 2% ຂອງມູນຄ່າ ແລະ ເອກະສານອື່ນໆ ທີ່ກ່ຽວຂ້ອງກັບບໍລິສັດ ( ລາຍລະອຽດໃຫ້ປະກອບຕາມ ມາດຖານເງື່ອນໄຂ ແລະ ຄຳແນະນຳ ).

สแกนด้วย CamScanner

❖ **ການພົວພັນເອົາເອກະສານ:**

ບັນດາບໍລິສັດທີ່ມີຄວາມສົນໃຈ ແລະ ມີຄຸນສົມບັດຄົບຖ້ວນ ສາມາດພົວພັນເອົາເອກະສານ ບົດສະເໜີ ( BOQ ) ແລະ ລົງທະບຽນ ເພື່ອເຂົ້າຮ່ວມການປະມູນໄດ້ທີ່ ຂະແໜງຊົນລະປະທານ ( ພະແນກກະສິກໍາ ແລະ ສິ່ງແວດລ້ອມ ) ຜູ້ຮັບຜິດຊອບ ທ່ານ ວ່າທາ ຊົວໄຊຊົງມາ ເບີໂທ: 020 54477859 ( ໃນລາຄາ 2,000,000 ກີບ/ຊອງ ).

❖ ກໍານົດເວລາຂາຍຊອງ, ສົ່ງຊອງ ແລະ ເປີດຊອງປະມູນ:

- ຂາຍຊອງປະມູນ ເລີ່ມແຕ່ ວັນທີ 30 ກໍລະກົດ 2026 ຫາ ວັນທີ 21 ສິງຫາ 2026 ໃນໂມງລັດຖະການ;
- ກໍານົດສົ່ງຊອງປະມູນ ວັນທີ 21 ສິງຫາ 2026 ບໍ່ໃຫ້ກາຍເວລາ 9:30 ໂມງ;
- ເປີດຊອງປະມູນ ວັນທີ 21 ສິງຫາ 2026 ເວລາ 10:00 ໂມງ ( ຫ້ອງປະຊຸມນ້ອຍຂອງພະແນກກະສິກໍາ ແລະ ສິ່ງແວດລ້ອມ ແຂວງຊຽງຂວາງ );

ດັ່ງນັ້ນ, ຈຶ່ງແຈ້ງເຊີນມາຍັງບັນດາບໍລິສັດທີ່ປຶກສາ, ບຸກຄົນ, ນິຕິບຸກຄົນ ເພື່ອເຂົ້າຮ່ວມການປະມູນໃນຄັ້ງນີ້ນໍາພວກເຮົາດ້ວຍ.

ຫົວໜ້າພະແນກ

ວຽງຄໍາ ຈັນທະລາ

สแกนด้วย CamScanner